**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 903 /ຈຂ.ອປ

ທີ່ ແຂວງອັດຕະປື, ວັນທີ 07 ກັນຍາ 2016

# ຄໍາສັ່ງ
# ຂອງເຈົ້າແຂວງ
## ວ່າດ້ວຍການກວດກາ, ເກັບກໍາຂໍ້ມູນເຂົ້າສໍາມະໂນ ແລະ ອອກສິດໃຊ້ທີ່ດິນ.

**ເຖິງ:** ບັນດາທ່ານຫົວໜ້າພະແນກການ ,ຫ້ອງການທຽບເທົ່າ,ເຈົ້າເມືອງ 5 ຕົວເມືອງຕະຫຼອດຮອດ ພະນັກງານທະຫານຕໍາຫຼວດແລະພໍ່ແມ່ປະຊາຊົນບັນດາເຜົ່າທຸກທົ່ວໜ້າຊາບ.

**ເລື່ອງ:** ການກວດກາ, ເກັບກໍາຂໍ້ມູນຂຶ້ນບັນຊີທີ່ດິນເຂົ້າສໍາມະໂນ ແລະ ອອກສິດໃຊ້ທີ່ດິນ.

- ອີງຕາມ ກົດໝາຍການປົກຄອງທ້ອງຖິ່ນແຫ່ງ ສປປລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ ກົດໝາຍທີ່ດິນ ເລກທີ 04/ ສພຊ, ລົງວັນທີ 21 ຕຸລາ 2003.
- ອີງໃສ່: ຄວາມເຫັນດີເປັນເອກະພາບ ໃນກອງປະຊຸມຄະນະປະຈໍາພັກແຂວງ ຄັ້ງວັນທີ : 05 / 05 /2016

ເພື່ອເປັນການສືບຕໍ່ຜັນຂະຫຍາຍຈັດຕັ້ງປະຕິບັດກົດໝາຍທີ່ດິນເລກທີ: 04/ ສພຊ, ລົງວັນທີ 21/ ຕຸລາ /2003 ແລະ ດໍາລັດເລກທີ: 88/ນຍ ລົງວັນທີ : 03 ມິຖຸນາ 2008 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍທີ່ດິນ: ເປັນຕົ້ນແມ່ນການຄຸ້ມຄອງການປົກປັກຮັກສານໍາໃຊ້ທີ່ດິນ,ການພັດທະນາທີ່ດິນໃຫ້ມີຄວາມສະຫງົບເປັນລະບຽບຮຽບຮ້ອຍມີຄວາມຍຸດຕິທໍາມີປະສິດທິພາບ ແລະ ປະສິດທິຜົນເປັນເອກະພາບໃນທົ່ວແຂວງທັງເປັນການສ້າງລາຍຮັບເຂົ້າງົບປະມານຂອງແຂວງນັບມື້ນັບເພີ່ມຂຶ້ນ.

### ເຈົ້າແຂວງອອກຄໍາສັ່ງແນະນໍາດັ່ງນີ້:

1. ມອບໃຫ້ພະແນກ ຊັບພະຍາກອນ ທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນເຈົ້າການ ປະສານສົມທົບກັບພະແນການເງິນແຂວງ, ພະແນກ ສ່ວຍສາອາກອນແຂວງ,ຄະນະໂຄສະນາອົບຮົມແຂວງ , ເຈົ້າເມືອງ 5 ຕົວເມືອງ ແລະ ທຸກພາກສ່ວນ ກ່ຽວຂ້ອງ ສືບຕໍ່ ຜັນຂະຫຍາຍເຜີຍແຜ່ກົດໝາຍທີ່ດິນ ເລກທີ: 04/ສພຊ , ລງົວັນທີ 21 ຕຸລາ 2003 ແລະ ນິຕິກໍາຕ່າງ ໆ ກ່ຽວກັບວຽກງານຄຸ້ມຄອງທີ່ດິນ ລົງສູ່ຮາກຖານບ້ານໃຫ້ເລິກເຊິ່ງທົ່ວເຖິງ. ສໍາລັບຂັ້ນເມືອງ ແມ່ນມອບໃຫ້ທ່ານ ເຈົ້າເມືອງ ຫຼື ຮອງເຈົ້າເມືອງເປັນຜູ້ ຊີ້ນໍາໂດຍກົງ ຕໍ່ຫ້ອງ ຊັບພະຍາກອນ ທໍາມະຊາດ ແລະ ສິ່ງແວດລ້ອມເມືອງ 5 ຕົວເມືອງ, ເພື່ອອອກແຈ້ງການຜັນຂະຫຍາຍຄໍາສັ່ງສະບັບນີ້ໃຫ້ບັນດາພໍ່ແມ່ປະຊາຊົນພາຍໃນເມືອງທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃຫ້ມີຄວາມຮັບຮູ້ເຊື່ອມຊຶມ ຢ່າງເລິກເຊິ່ງ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

2. ມອບໃຫ້ພະແນກ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນເຈົ້າການປະສານສົມທົບ ກັບທຸກພາກສ່ວນ ກ່ຽວຂ້ອງໃນການກວດກາ ເກັບກຳຂໍ້ມູນທີ່ດິນເຂົ້າສຳມະໂນ ແລະ ອອກສິດໃຊ້ທີ່ດິນຄືນໃໝ່ໃຫ້ຄົບຖ້ວນ ໃນ 5ຕົວເມືອງ ໃຫ້ສຳເລັດພາຍໃນກຳນົດ 6 ເດືອນ ນັບແຕ່ ວັນທີ. / /2016ຫາວັນທີ. / /2016 ໝາຍຄວາມວ່າ ຜ່ານການກວດກາ, ເກັບກຳຂໍ້ມູນ ກ່ຽວກັບທີ່ດິນຄັ້ງນີ້ ດິນຕອນໃດທີ່ບຸກຄົນໄດ້ມີການຄອບຄອງ ການພັດທະນາ ດ້ວຍຄວາມສະຫງົບ ບໍ່ນອນຢູ່ໃນຂໍ້ຫ້າມກົດໝາຍທີ່ດິນເກືອດຫ້າມ ແຕ່ຍັງບໍ່ທັນມີເອກະສານ ຄົບຖ້ວນແມ່ນໃຫ້ ຂະແໜງການທີ່ດິນແຂວງ, ເມືອງອອກເອກະສານສິດນຳໃຊ້ທີ່ດິນໃຫ້ເລີຍ ເພື່ອເຂົາເຈົ້າໄດ້ຄຸ້ມຄອງນຳໃຊ້ ຢ່າງຖືກຕ້ອງຕາມລະບຽບກົດໝາຍ ເພື່ອສາມາດ ກຳໃຫ້ໄດ້ ແຕ່ລະຄອບຄົວ ມີດິນຈັກຕອນ, ມີເນື້ອທີ່ເທົ່າໃດ ມີຈັກປະເພດດິນ ທັງເປັນຂໍ້ມູນພື້ນຖານ ສິ່ງໃຫ້ຂະແໜງການເງິນເກັບພາສີທີ່ດິນຢ່າງຖືກຕ້ອງຄົບຖ້ວນ.
3. ໃຫ້ພໍ່ແມ່ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດແມ່ຄ້າຊາວຂາຍພາຍໃນແຂວງອັດຕະປືຈົ່ງຮັບຊາບວ່າ: ຜູ້ໃດທີ່ມີດິນ ທີ່ຕົນໄດ້ຄອບຄອງ ແລະ ປົກປັກຮັກສາມີ ຄວາມສະຫງົບເປັນເວລາຍາວນານ ຕາມປະເພນີມີການພັດທະນາ ທີ່ບໍ່ນອນໃນຂໍ້ຫ້າມດັ່ງຂໍ້ທີ6 ລຸ່ມນີ້ ໂດຍຖືກຕ້ອງຕາມກົດໝາຍທີ່ດິນເລກທີ 04/ ສພຊ, ລົງວັນທີ 21 ຕຸລາ 2003 ກຳນົດໄວ້ . ແຕ່ຍັງບໍ່ທັນມີເອກະສານ, ມີເອກະສານສິດໃຊ້ ແລະ ສິດນຳໃຊ້ທີ່ດິນ ( ຄື:ໃບແຈ້ງທີ່ດິນ,ໃບແຜນທີ່ຕາດິນ ແລະ ໃບຕາດິນ) ຈົ່ງພາກັນຮີບຮ້ອນນຳເອົາເອກະສານຢັ້ງຢືນຂອງທ່ານເຂົ້າມາແຈ້ງຢູ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ຫຼື ແຈ້ງໃຫ້ໜ່ວຍງານພາສີທີ່ດິນບ້ານບ່ອນທີ່ດິນຕັ້ງຢູ່ ເພື່ອທຳການລົງກວດກາຕົວຈິງ ແລະ ສັງລວມເກັບກຳຂໍ້ມູນບັນທຶກ ພາຍໃນກຳນົດ 30 ວັນ. ແມ່ນໃຫ້ບັນດາຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ລົງສົມທົບກັບອຳນາດການປົກຄອງບ້ານ ເພື່ອເກັບກຳຂໍ້ມູນຕົວຈິງຢ່າງລະອຽດ ເມື່ອເຫັນວ່າຖືກຕ້ອງ ຄົບຖ້ວນ ຕາມລະບຽບກົດໝາຍແລ້ວ ຈຶ່ງອອກເອກະສານຢັ້ງຢືນສິດໃຊ້ ແລະ ສິດນຳໃຊ້ທີ່ດິນດັ່ງກ່າວ ໄປຕາມແຕ່ລະກໍລະນີ ໃຫ້ຜູ້ກ່ຽວຂ້ອງຄຸ້ມຄອງນຳໃຊ້ຕໍ່ໄປພ້ອມທັງໃຫ້ມີການ ເສຍພັນທະພາສີອາກອນຕ່າງໆ ຕາມທີ່ລັດໄດ້ກຳນົດໄວ້ຢ່າງຄົບຖ້ວນ.ຖ້າຫາກບຸກຄົນໃດບໍ່ມາແຈ້ງພາຍໃນກຳນົດ 30 ວັນ ຖືວ່າຕອນດິນດັ່ງກ່າວນັ້ນແມ່ນເປັນການນຳໃຊ້ທີ່ດິນບໍ່ຖືກຕ້ອງຕາມລະບຽບກົດໝາຍ. ບໍ່ໄດ້ຂຶ້ນສຳມະໂນຕອນດິນ, ຖ້າຫາກວ່າກວດພົບເຫັນການນຳໃຊ້ທີ່ດິນດັ່ງກ່າວນັ້ນຫາກບໍ່ຖືກຕ້ອງຕາມເປົ້າໝາຍ ຫຼື ມີການປິດບັງດ້ານເນື້ອທີ່ການນຳໃຊ້. ແມ່ນຈະຖືກປັບໃໝຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ດິນ ພາກທີ V ມາດຕາ 83 , ຖ້າຕ້ອງການໃຊ້ເນື້ອທີ່ສ່ວນເກີນຈະຕ້ອງໄດ້ເສຍພາສີຄືນຫຼັງ.

4. ສຳລັບດິນລັດ, ດິນລວມໝູ່, ດິນສຳນັກງານອົງການຕ່າງໆ ມອບໃຫ້ພະແນກການອ້ອມຂ້າງແຂວງ, ກອງບັນຊາການ ປກສ ປກຊ ແຂວງ ແລະ 5 ຕົວເມືອງ ໃຫ້ກວດກາເບິ່ງວ່າ ທີ່ດິນແຕ່ລະຕອນ ທີ່ຕົນໄດ້ຄຸ້ມຄອງນຳໃຊ້ນັ້ນ ມີເອກະສານຄົບຖ້ວນຖືກຕ້ອງຕາມລະບຽບກົດໝາຍແລ້ວບໍ ຖ້າຍັງບໍ່ທັນມີ ໃຫ້ຮີບຮ້ອນໄປຂຶ້ນບັນຊີປະກອບເອກະສານຕ່າງໆ ໃຫ້ຄົບຖ້ວນ ຢູ່ນຳພະແນກ ພຊສ ແຂວງຫຼື ຫ້ອງການ ຊສ ເມືອງ.

5. ຫ້າມຈັບຈອງທີ່ດິນ ຫຼື ບຸກລຸກທີ່ດິນ: ການຈັບຈອງ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ແມ່ນໃຫ້ພະແນກຊັບພະຍາກອນທຳມະຊາດສິ່ງແວດລ້ອມແຂວງເປັນເຈົ້າການປະສານສົມທົບກັບອຳນາດການປົກຄອງເມືອງ5ຕົວເມືອງ , ພະແນກການກ່ຽວຂ້ອງອອ້ມແຂວງ ແລະ ທຸກພາກສ່ວນກ່ຽວຂ້ອງເພື່ອດຳເນີນການ ລົບລ້າງໃນກໍລະນີຫາກ ພົບເຫັນມີການກໍ່ຄວາມເສຍຫາຍຕ້ອງດຳເນີນຄະດີຕາມຂະບວນການຍຸດຕິທຳຢ່າງເຂັ້ມງວດການຈັບຈອງບຸກລຸກທີ່ດິນທີ່ບໍ່ຖືກຕ້ອງສະແດງອອກດັ່ງນີ້:

5.1 ຈ່ອງດິນເຂດປ່າສະຫງວນ, ປ່າດົງດິບ, ປ່າຍອດນ້ຳ, ທີ່ດິນບໍລິເວນບໍ່ແຮ່, ເຂດວັດທະນາທຳບູຮານສະຖານ, ເຂດທ່ອງທ່ຽວທຳມະຊາດ ,ເຂດປະຫັວດສາດ ແລະ ເຂດສະຫວງນຂອງລັດ,

5.2 ບຸກລຸກບຽດຢຶດດິນສຳນັກງານອົງການຂອງພັກຂອງລັດ ແລະ ອົງການຈັດຕັ້ງມະຫາຊົນ. ການຈັບຈ່ອງໂດຍບໍ່ໄດ້ຮັບອະນຸຍາດ ດ້ວຍຮູບການ ຂຸດດິນ ເປັນຮ່ອງ, ປູກຕົ້ນໄມ້ໃສ່, ປັກຕາແລວ, ລ້ອມຮົ້ວໄວ້, ປຸກເຮືອນຫຼືຮ້ານໃສ່ເພື່ອໝາຍບ່ອນ, ໝາຍເຂດແດນ ຫຼື ແບ່ງເຂດແດນຕາມສາຍນ້ຳ ແລະ ຫ້ວຍນ້ຳຕາມທຳມະຊາດແລ້ວໃຊ້ສິດຫວງຫ້າມ ສະຫງວນເປັນຂອງຕົນເອງ ຫຼືສວຍໃຊ້ອຳນາດ, ໜ້າທີ່,ຕຳແໜ່ງບຸກລຸກເອົາທີ່ດິນເຂດສະຫງວນຂອງລັດ ,ດິນທີ່ລັດກຳລັງດຳເນີນການຈັດສັນ ແລະ ທີ່ດິນລັດຍັງບໍ່ທັນໄດ້ຈັດສັນ.

5.3 ຫ້າມຂະແໜງການຄຸ້ມຄອງທີ່ດິນແຂວງ, ເມືອງ, ອຳນາດການປົກຄອງທຸກຂັ້ນແຕ່ແຂວງລົງຮອດຂັ້ນບ້ານອອກອະນຸຍາດໃຫ້ສິດນຳໃຊ້ທີ່ດິນ ຫຼື ສິດໃຊ້ທີ່ດິນແກ່ບຸກຄົນ ຫຼື ການຈັດຕັ້ງ ກອນ ຫຼື ຫຼັງປະກາດໃຊ້ກົດໝາຍທີ່ດິນ ມີປະເພດທີ່ດິນລຸ່ມນີ້:

- ທີ່ດິນປ່າປ້ອງກັນ,ປ່າສະຫງວນ, ປ່າດົງດິບ, ດິນບໍລິເວນອ່າງເກັບນ້ຳທຳມະຊາດ, ຍອດຫ້ວຍ, ຍອດແມ່ນ້ຳ, ລຳເຊ,ທີ່ດິນແຄມໜອງແຄມບຶງທຳມະຊາດ ແລະ ທີ່ດິນທີ່ລັດສະຫງວນໄວ້,ທີ່ດິນເຂດສະຫງວນຫວງຫ້າມຂອງລັດ ແລະ ລວມໝູ່, ທີ່ດິນບໍລິເວນບໍ່ແຮ່, ເຂດວັດທະນະທຳ ແລະ ບູຮານສະຖານ, ເຂດທ່ອງທ່ຽວທຳມະຊາດ ,ເຂດປະຫັວດສາດ ແລະ ເຂດສະຫວງນຂອງລັດ.ທີ່ດິນປ້ອງກັນຊາດປ້ອງກັນຄວາມສະຫງົບ,ທີ່ດິນຄົມນາຄົມ ສະຫງວນໄວ້ສ້າງທາງ ຫຼື ສ້າງສິ່ງສາທາລະນະປະໂຫຍດອື່ນໆ , ທີ່ດິນສະຫງວນໄວ້ສ້າງສາຍສົ່ງ ຫຼື ແລວສາຍໄຟຟ້າ , ທີ່ດິນທີ່ມີລະບຽບກົດໝາຍຫວງຫ້າມແລ້ວ.
- ທຸກໆເອກະສານທີ່ບ້ານ,ເມືອງ,ແຂວງໄດ້ອອກເອກະສານທີ່ຂັດກັບກັບຄຳສັ່ງສະບັບນີ້ລ້ວນແຕ່ຖືກລົບລ້າງ. ຍົກເວັ້ນແຕ່ໃນກໍລະນີທີ່ທາງການຈັດຕັ້ງໄດ້ຕົກລົງສະເພາະ.

6. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ບ່ອນນຳສົ່ງ:

| | | |
|---|---|---|
| 1. | ພະແນກການອ້ອມຂ້າງແຂວງພະແນກລະ | 1 ສະບັບ |
| 2. | ອົງການທຽບເທົ່າອົງການລະ | 1 ສະບັບ |
| 3. | ຫ້ອງວ່າການປົກຄອງເມືອງໆລະ | 1 ສະບັບ |
| 4. | ຫ້ອງການ ຊສ ເມືອງ ໆ | 1 ສະບັບ |
| 5. | ເກັບມ້ຽນ | 1 ສະບັບ |

ແຂວງອັດຕະປື

ເຈົ້າແຂວງແຂວງອັດຕະປື

ດຣ.ນາມ ວິຍະເກດ